# Review lesson

1. **ຄວາມຮູ້ທົ່ວໄປກ່ຽວກັບເຂດເສດຖະກິດພິເສດ.**

ເຂດເສດຖະກິດພິເສດ ຂຽນຫຍໍ້ວ່າ " ຂສພ" ຂຽນເປັນພາສາອັງກິດ Special Economic Zone "SEZ" ແມ່ນເຂດທີ່ມີກົນໄກຄຸ້ມຄອງບໍລິຫານສະເພາະ ເພື່ອສ້າງເງື່ອນໄຂໃຫ້ແກ່ການດຶງດູດການລົງທຶນ ທີ່ນຳໃຊ້ເຕັກໂນໂລຊີສູງ, ນຳໃຊ້ນະວັດຕະກຳ ໃນການຜະລິດກະສິກຳເປັນສິນຄ້າ, ການຜະລິດທີ່ສະອາດ, ປະຢັດຊັບພະຍາກອນທຳມະຊາດ ແລະ ພະລັງງານ ເພື່ອພັດທະນາແບບຍືນຍົງ ແລະ ເປັນມິດກັບສິ່ງແວດລ້ອມ.

ເຂດເສດຖະກິດພິເສດອາດປະກອບມີ ນິຄົມອຸດສະຫະກຳ, ເຂດພັດທະນາກະສິກຳ, ອຸດສະຫະກຳປຸງແຕ່ງເພື່ອສົ່ງອອກ, ການພັດທະນາເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ, ການບໍລິການ, ການຄ້າ ແລະ ການທ່ອງທ່ຽວ.

2. **ຄວາມໝາຍຂອງເຂດເສດຖະກິດພິເສດ ແລະ ເສດຖະກິດສະເພາະ.**

ເຂດເສດຖະກິດສະເພາະ ແມ່ນເຂດທີ່ລັດຖະບານ ກຳນົດໃຫ້ເປັນເຂດທີ່ມີທີ່ຕັ້ງ, ມີສະພາບແວດລ້ອມດ້ານເສດຖະກິດ ສາມາດອຳນວຍຄວາມສະດວກ ແລະ ເປັນເອກະລາດ ໃນການດຳເນີນທຸລະກິດຫຼາຍກວ່າເຂດອື່ນ ໃນຂອບເຂດທົ່ວປະເທດ, ໂດຍສ້າງໃຫ້ມີພື້ນຖານໂຄງລ່າງ ດ້ານເສດຖະກິດ - ສັງຄົມ, ສະຖາບັນ ແລະ ອື່ນໆທີ່ຄົບຊຸດ ເພື່ອຍົກສູງຄວາມສາມາດແຂ່ງຂັນ ໃນການດຳເນີນທຸລະກິດ ຊຶ່ງຈະເປັນສິ່ງດຶງດູດຈິດໃຈໃຫ້ແກ່ການລົງທຶນຂອງທຸກພາກສ່ວນ ເຂົ້າໃນການພັດທະນາເຂດດັ່ງກ່າວ ເພື່ອໃຫ້ມີການພັດທະນາເສດຖະ ກິດໄວກວ່າເຂດອື່ນ. ການຕັ້ງຊື່ຂອງເຂດເສດຖະກິດສະເພາະ ແມ່ນອີງໃສ່ຄຸນລັກສະນະສະເພາະ ຂອງແຕ່ລະເຂດໃດໜຶ່ງ ທີ່ເໝາະສົມຕາມຄຸນລັກສະນະຂອງ ພື້ນຖານໂຄງລ່າງ ແລະ ສະຖາບັນ ທີ່ເອື້ອອຳນວຍໃນການດຳເນີນທຸລະກິດ, ການຜະລິດ ແລະ ການບໍລິການ ທີ່ມີຄວາມແຕກຕ່າງກັນໄປ ຕາມຄຸນລັກສະນະສະເພາະ ຂອງແຕ່ລະປະເພດ ທີ່ຕ້ອງການພັດທະນາ. ເຂດເສດຖະກິດສະເພາະ ໄດ້ຮັບນະໂຍບາຍສົ່ງເສີມສະເພາະ, ມີລະບົບເສດຖະກິດ-ການເງິນ ເປັນເຈົ້າຕົນເອງ, ມີສະພາບໍລິຫານເສດຖະກິດເປັນຜູ້ບໍລິຫານ ແລະ ຄຸ້ມຄອງ ຕາມກົນໄກຕາປະທັບດຽວ ແລະ ມີຫົວໜ່ວຍການດຳເນີນທຸລະກິດການຜະລິດ, ການຄ້າ ແລະ ການບໍລິການຈຳນວນໜຶ່ງ ຊຶ່ງມີການກຳນົດເຂດແດນຢ່າງຈະແຈ້ງ ແລະ ບໍ່ມີປະຊາຊົນດຳລົງຊີວິດຢູ່ໃນເຂດດັ່ງກ່າວ.

3. **ຄວາມສຳຄັນ ແລະ ຄວາມຈຳເປັນຂອງການສ້າງ ເຂດເສດຖະກິດພິດເສດ ແລະ ເຂດເສດຖະກິດສະເພາະ**

ການສ້າງຕັ້ງເຂດເສດຖະກິດພິເສດແມ່ນມີຄວາມສຳຄັນຫຼາຍ, ເນື່ອງຈາກວ່າເຂດດັ່ງກ່າວນີ້ເປັນເຂດທີ່ມີນະໂຍບາຍ ແລະ ລະບຽບການຄຸ້ມຄອງທີ່ແຕກຕ່າງຈາກເຂດອື່ນຢູ່ພາຍໃນປະເທດ ໂດຍສະເພາະນະໂຍບາຍຫຼຸດຜ່ອນທາງດ້ານພາສີອາກອນ, ນະໂຍບາຍໃນການນຳໃຊ້ແຮງງານ ແລະ ມີລະບຽບໃນການບໍລິຫານທາງດ້ານການເງິນທີ່ອິດສະຫຼະ, ຊຶ່ງເປັນຈຸດດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ. ພ້ອມດຽວກັນນີ້, ເຂດດັ່ງກ່າວ ກໍ່ເປັນເຂດທີ່ຕ້ອງນຳໃຊ້ເງິນທຶນຈຳນວນຫຼາຍໃນການພັດທະນາພື້ນຖານໂຄງລ່າງ, ເປັນເຂດທີ່ຕ້ອງນຳໃຊ້ເຕັກໂນໂລຊີທີ່ທັນສະໄໝ ແລະ ແຮງງານທີ່ມີທັກສະ. ສະນັ້ນ, ຈຸດດີໃນການສ້າງຕັ້ງເຂດເສດຖະກິດພິເສດ ແມ່ນສາມາດສ້າງແຮງຈູງໃຈ ແລະ ກະຕຸ້ນໃຫ້ນັກລົງທຶນຕ່າງປະເທດ ນຳເອົາເງິນທຶນ ຫຼື ເງິນຕາຕ່າງປະເທດ, ນຳເອົາເຕັກໂນໂລຊີ ແລະ ແຮງງານທີ່ມີທັກສະມາພັດທະນາ ຫຼື ລົງທຶນໃນເຂດດັ່ງກ່າວ.

ໃນຂະນະດຽວກັນ, ກໍ່ເປັນການຖ່າຍທອດບົດຮຽນ, ເຕັກໂນໂລຊີ, ຄວາມຮູ້ ໃຫ້ບຸກຄະລະກອນຂອງປະເທດເຈົ້າພາບ. ສ້າງໂອກາດ ແລະ ວຽກເຮັດງານທຳໃຫ້ປະຊາຊົນທີ່ດຳລົງຊີວິດຢູ່ເຂດນັ້ນ, ເຮັດໃຫ້ອັດຕາການຫວ່າງງານພາຍໃນປະເທດຫຼຸດລົງ, ເປັນການເພີ່ມຂີດຄວາມສາມາດຂອງຫົວໜ່ວຍທຸລະກິດພາຍໃນປະເທດ, ເຮັດ

ໃຫ້ມີການລົງທຶນໃນເຂດດັ່ງຂອງຜູ້ລົງທຶນພາຍໃນປະເທດຫຼາຍຂຶ້ນ, ຊຶ່ງເຮັດໃຫ້ຜະຫຼິດຕະພັນພາຍໃນມີການຂະຫຍາຍຕົວ ແລະ ການສົ່ງອອກສິນຄ້າເພີ່ມຂຶ້ນ.

ອີກໜຶ່ງຈຸດສຳຄັນຂອງເຂດເສດຖະກິດພິເສດ, ແມ່ນສູນກາງການຮຽນຮູ້ທາງດ້ານເຕັກໂນໂລຊີ ເນື່ອງຈາກວ່າມີແຮງງານທີ່ມີສີມື ແລະ ທັກສະ ທັງຈາກພາຍໃນ ແລະ ຕ່າງປະເທດ, ຊຶ່ງກໍ່ເປັນໂອກາດທີ່ດີ ທີ່ຈະໄດ້ຖ່າຍທອດ ແລະ ແລກປ່ຽນເຜີຍແຜ່ຄວາມຮູ້ເຊິ່ງກັນ ແລະ ກັນ. ນອກຈາກນີ້, ກໍ່ເຮັດໃຫ້ພື້ນຖານໂຄງລ່າງມີການພັດທະນາ, ເສດຖະກິດມີການຂະຫຍາຍຕົວ ແລະ ເປັນທີ່ຍອມຮັບໃນລະດັບສາກົນ.

ປະເທດໃດກໍຕາມ ທີ່ໄດ້ກຳນົດໃຫ້ມີການສ້າງຕັ້ງເຂດເສດຖະກິດພິເສດ, ຈະໄດ້ຮັບຜົນປະໂຫຍດໃນການສ້າງຕັ້ງເຂດດັ່ງກ່າວ ເປັນຕົ້ນແມ່ນຫຼຸດຜ່ອນງົບປະມານທີ່ນຳໃຊ້ເຂົ້າໃນການພັດທະນາດ້ວຍວິທີເປີດໂອກາດໃຫ້ຜູ້ພັດທະນາຈາກຕ່າງປະເທດເປັນຜູ້ພັດທະນາພື້ນຖານໂຄງລ່າງ ຫຼື ດ້ວຍຮູບການພັດທະນຮ່ວມກັນລະຫວ່າງລັດ ແລະ ເອກະຊົນ, ເນື່ອງຈາກວ່າ ຕ້ອງໄດ້ນຳໃຊ້ເງິນທຶນຈຳນວນມະຫາສານໃນການພັດທະນາ, ໃນຂະນະດຽວກັນກໍ່ເປັນເງື່ອນໄຂໜຶ່ງທີ່ເຮັດໃຫ້ລັດຖະບານ ຫຼື ນິຕິບຸກຄົນ ທີ່ພັດທະນາເຂດດັ່ງກ່າວ ສາມາດເຂົ້າເຖິງແຫຼ່ງທຶນ ຫຼື ສາມາດກູ້ຢືມເງິນຈາກລັດຖະບານ ຫຼື ສະຖາບັນການເງິນ ໃນໄລຍະຍາວດ້ວຍອັດຕາດອກເບ້ຍທີ່ຕ່ຳ ດ້ວຍເຫດນີ້, ເຂດດັ່ງກ່າວນີ້ຈຶ່ງເປັນທີ່ສົນໃຈ ແລະ ດຶງດູດການລົງທຶນໂດຍກົງຂອງນັກລົງທຶນຕ່າງປະເທດ.

4. **ຫຼັກການ ແລະ ການສະເໜີສ້າງຕັ້ງ**

   1) ກຳນົດແຈ້ງວັດຖຸປະສົງຂອງເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
   2) ກຳນົດແຈ້ງຜົນປະໂຫຍດຂອງລັດ, ຜູ້ພັດທະນາ ແລະ ປະຊາຊົນ;
   3) ເປັນເຂດທີ່ເໝາະສົມກັບວັດຖຸປະສົງຂອງແຕ່ລະເຂດເສດຖະກິດພິເສດ ແລະ ເຂດເສດຖະກິດສະເພາະ;
   4) ກຳນົດເນື້ອທີ່ ແລະ ເຂດແດນຢ່າງຈະແຈ້ງ;
   5) ມີນະໂຍບາຍສົ່ງເສີມທາງດ້ານເສດຖະກິດສະເພາະ;
   6) ມີລະບົບບໍລິຫານດ້ານເສດຖະກິດທີ່ເປັນເອກະລາດຕາມແຕ່ລະເຂດ;
   7) ຢູ່ພາຍໃຕ້ການຄຸ້ມຄອງໂດຍກົງຂອງລັດຖະບານ ຫຼື ອົງການປົກຄອງແຂວງ ຕາມການຕົກລົງຂອງລັດຖະບານ;
   8) ຮັບປະກັນຄວາມໝັ້ນຄົງ, ຄວາມສະຫງົບ, ຄວາມປອດໄພ ແລະ ການປົກປັກຮັກສິ່ງແວດລ້ອມພາຍໃນເຂດ;
   9) ຮັບປະກັນການພັດທະນາແບບຍືນຍົງ, ປົກປັກຮັກສາສິ່ງແວດລ້ອມ, ສົ່ງເສີມ ແລະ ອະນຸລັກວັດທະນາທຳອັນດີງາມຂອງຊາດ.

5. **ສິດ ແລະ ໜ້າທີ່ຂອງຄະນະຮັບຜິດຊອບສ້າງຕັ້ງ ຂພສ**

   1) ຄົ້ນຄວ້າ, ສະເໜີບັນຫາ ແລະ ພົວພັນກັບພາກສ່ວນຕ່າງໆກ່ຽວກັບການສ້າງຕັ້ງ ຂພສ;
   2) ຄົ້ນຄວ້າ, ສ້າງແຜນແມ່ບົດພັດທະນາຮອບດ້ານຂອງ ຂພສ ໂດຍປະສານສົມທົບກັບບັນດາຂະແໜງ ການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;
   3) ແກ້ໄຂບັນຫາຕ່າງໆ ທີ່ພົວພັນກັບການສ້າງຕັ້ງ ຂພສ ເປັນຕົ້ນບັນຫາທີ່ດິນ ແລະ ຜົນປະໂຫຍດຂອງປະຊາຊົນໃນ ຂພສ ໂດຍມີການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ;
   4) ປະຕິບັດການຊົດເຊີຍຜົນປະໂຫຍດຂອງປະຊາຊົນ ຕາມລະບຽບການ ແລະ ຈັດສັນປະຊາຊົນທີ່ຖືກຜົນກະທົບຈາກໂຄງການ;

5) ຄົ້ນຄວ້ານະໂຍບາຍສົ່ງເສີມ ແລະ ເງື່ອນໄຂຕ່າງໆທີ່ກໍານົດໄວ້ໃນສັນຍາສໍາປະທານ ຫວ່າງ ລັດຖະບານ ແລະ ຜູ້ພັດທະນາ;

6) ປະສານສົມທົບກັບອົງການປະຈໍາການ ຄຂພສ ເພື່ອເຈລະຈາສັນຍາກັບຜູ້ພັດທະນາ ແລະ ຮ່າງສັນຍາເບື້ອງຕົ້ນ ເພື່ອສະເໜີ ຄຂພສ ພິຈາລະນາ;

7) ກໍລະນີມີຄວາມຈໍາເປັນກໍສາມາດວ່າຈ້າງທີ່ປຶກສາ ຫຼື ຜູ້ຊ່ຽວຊານພາຍໃນ ແລະ ຕ່າງປະເທດ ເພື່ອຊ່ວຍຄົ້ນຄວ້າການສ້າງຕັ້ງ ຂພສ ໃຫ້ສໍາເລັດ ສໍາລັບການຄ່າໃຊ້ຈ່າຍໃນການວ່າຈ້າງດັ່ງກ່າວແມ່ນຜູ້ ພັດທະນາເປັນຜູ້ຮັບຜິດຊອບ;

8) ຄະນະຮັບຜິດຊອບສ້າງຕັ້ງ ແລະ ຜູ້ພັດທະນາ ນໍາສະເໜີຜົນຂອງການສຶກສາຄວາມເປັນໄປໄດ້ຂອງ ການພັດທະນາຕໍ່ກອງປະຊຸມຮ່ວມກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສະຫຼຸບຜົນຂອງການສຶກສາ ຄວາມເປັນໄປໄດ້ ແລະ ໃຫ້ຄໍາເຫັນຊີ້ນໍາດ້ານມະຫາພາກຕໍ່ໂຄງການ ເພື່ອຮັບປະກັນການພັດທະນາ ຢ່າງມີປະສິດທິຜົນ ແລະ ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;

9) ຄະນະຮັບຜິດຊອບສ້າງຕັ້ງ ແລະ ຜູ້ພັດທະນາ ປຶກສາຫາລື ຫຼື ປັບປຸງບັນຫາທີ່ຍັງບໍ່ທັນແຈ້ງຕາມການຊີ້ນໍາຂອງກອງປະຊຸມທີ່ໄດ້ກໍານົດໄວ້ໃນຂໍ້ 8 ຂ້າງເທິງນີ້, ເພື່ອຢັ້ງຢືນເປັນລາຍລັກອັກສອນໃຫ້ ອົງການປະຈໍາການ ຄຂພສ ເພື່ອລາຍງານຕໍ່ ຄຂພສ;

10) ຄົ້ນຄວ້າ ແລະ ນໍາສະເໜີບຸກຄະລາກອນທີ່ຈະປະກອບເຂົ້າໃນຄະນະບໍລິຫານ ຫຼື ສະພາບໍລິຫານ ຂພສ ເພື່ອນໍາສະເໜີຂໍການແຕ່ງຕັ້ງຈາກປະທານ ຄຂພສ.

11) ດໍາເນີນການສ້າງຕັ້ງ ຂສພ ໃຫ່ສໍາເຫຼັດຕາມຈຸດປະສົງ, ລະດັບຄາດໝາຍ ແລະ ກໍານົດເວລາ.

## 6. ຮູບການພັດທະນາ ເຂດເສດຖະກິດພິເສດມີຄືແນວໃດ?

1) ລັດລົງທຶນຮ້ອຍສ່ວນຮ້ອຍ;
2) ລັດຮ່ວມທຶນກັບເອກະຊົນພາຍໃນ ຫຼື ຕ່າງປະເທດ;
3) ເອກະຊົນລົງທຶນຮ້ອຍສ່ວນຮ້ອຍ.

## 7. ການລົງທຶນພັດທະນາເຂດເສດຖະກິດພິເສດ ຂອງວິສະຫະກິດ ເອກະຊົນຕ້ອງມີເງືອນໄຂຄືແນວໃດ?

1) ມີຖານະນິຕິບຸກຄົນ;
2) ມີຖານະການເງິນທີເຂັ້ມແຂງໝັ້ນຄົງ ໂດຍໄດ້ຮັບການກວດກາ ແລະ ຢັ້ງຢືນຈາກສະຖາບັນການເງິນພາຍໃນ ຫຼື ຕ່າງປະເທດ ທີ່ເຊື່ອຖືໄດ້;
3) ມີປະສົບການ ແລະ ໄດ້ຮັບຜົນສໍາເລັດ ໃນການດໍາເນີນທຸລະກິດ ໂດຍມີການຢັ້ງຢືນຈາກອົງການທີກ່ຽວຂ້ອງ;
4) ບໍ່ເຄີຍຖືກສານຕັດສິນໃຫ້ລົ້ມລະລາຍ ແລະ ບໍ່ເຄີຍຖືກສານຕັດສິນລົງໂທດຕັດອິດສະຫຼະພາບ ຍ້ອນການກະທໍາຜິດໂດຍເຈດຕະນາ.

## 8. ນະໂຍບາຍສົ່ງເສີມຕໍ່ຜູ້ພັດທະນາ ເຂດເສດຖະກິດພິເສດ?
**ນະໂຍບາຍຕໍ່ຜູ້ພັດທະນາເຂດເສດຖະກິດພິເສດ ປະກອບມີ:**

1) ນະໂຍບາຍສົ່ງເສີມດ້ານພາສີ, ສ່ວຍສາອາກອນ, ຜູ້ພັດທະນາເຂດ ໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນດັ່ງນີ້: ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນໍາເຂົ້າ ແລະ ສົ່ງອອກ ປະຕິບັດຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ.

ຂະແໜງອຸດສາຫະກຳການຜະລິດ, ຂະແໜງບໍລິການ ການພັດທະນາອຸດສາຫະກຳການທ່ອງທ່ຽວ,ການບໍລິ ການທາງດ້ານສາທາລະນະສຸກ, ສຶກສາ, ກິລາ-ກາຍຍະກຳ ແລະ ການພັດທະນາອະສັງຫາລິມະຊັບ ໄດ້ຮັບນະໂຍບາຍ ສົ່ງເສີມດ້ານອາກອນກຳໄລ ໂດຍອີງຕາມເຂດທີ່ຕັ້ງຄື: ເຂດ 1 ຍົກເວັ້ນອາກອນກຳໄລ ສິບຫົກ ປີ, ເຂດ 2 ຍົກເວັ້ນອາກອນກຳໄລ ແປດປີ ພາຍຫຼັງສິ້ນສຸດໄລຍະຍົກເວັ້ນ ຈະໄດ້ເສຍ ສາມສິບຫ້າສ່ວນຮ້ອຍ (35%) ຂອງອັດຕາອາ ກອນກຳໄລ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ວ່າດ້ວຍສ່ວຍສາອາກອນ ພາຍໃນກຳນົດຫ້າປີ, ຫຼັງຈາກນັ້ນ ໃຫ້ເສຍໃນອັດຕາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍສ່ວຍສາອາກອນ.

ການກໍ່ສ້າງເສັ້ນທາງ, ລະບົບໄຟຟ້າ, ນ້ຳປະປາ, ລະບົບບຳບັດນ້ຳເປື້ອນ ແລະ ກຳຈັດສິ່ງເສດເຫຼືອ ໄດ້ຮັບການຍົກເວັ້ນ ອາກອນມູນຄ່າເພີ່ມ, ສ່ວນການກໍ່ສ້າງພື້ນຖານໂຄງລ່າງອື່ນໆແມ່ນໃຫ້ເສຍຫ້າສິບສ່ວນຮ້ອຍ (50%) ຂອງອັດຕາອາກອນມູນຄ່າເພີ່ມ ທີ່ກຳນົດໄວ້ໃນກົດໝາຍ ວ່າດ້ວຍອາກອນມູນຄ່າເພີ່ມ.

ຜູ້ພັດທະນາ ຂພສ ຈະໄດ້ຮັບນະໂຍບາຍດ້ານພາສີ, ສ່ວຍສາອາກອນແບບພິເສດ, ຊຶ່ງໂດຍທົ່ວໄປແລ້ວ, ນະໂຍບາຍດ້ານພາສີ, ສ່ວຍສາອາກອນກ່ຽວກັບການນຳເຂົ້າ ແລະ ສົ່ງອອກແມ່ນຈະປະຕິບັດຕາມຂໍ້ກຳນົດຂອງກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ.

**2) ນະໂຍບາຍສົ່ງເສີມການນຳໃຊ້ທີ່ດິນ**

ຜູ້ພັດທະນາເຂດ ມີສິດນຳໃຊ້ທີ່ດິນ ໃນເຂດເສດຖະກິດພິເສດ ແລະ ມີສິດນຳເອົາສິດດັ່ງກ່າວໃຫ້ເຊົ່າຕໍ່,ມອບ, ໂອນໃຫ້ຜູ້ລົງທຶນຕາມອາຍຸສັນຍາພັດທະນາ ພາຍຫຼັງທີ່ໄດ້ພັດທະນາສຳເລັດຢ່າງໜ້ອຍສີ່ສິບຫ້າສວ່ນຮ້ອຍ (45%) ຂອງແຜນພັດທະນາໃນແຕ່ລະໄລຍະຕາມທີ່ໄດ້ກຳນົດໄວ້ໃນແຜນແມ່ບົດການພັດທະນາ ໂດຍມີການຢັ້ງຢືນຂອງຄະນະຄຸ້ມຄອງເຂດ.

**3) ນະໂນບາຍສົ່ງເສີມດ້ານອື່ນໆ**, ຜູ້ພັດທະນາເຂດໄດ້ຮັບນະໂຍບາຍຊ່ວຍໜູນການລົງທຶນ ຕາມທີ່ກຳນົດໄວ້ ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ຜູ້ພັດທະນາຈະໄດ້ຮັບນະໂຍບາຍສົ່ງເສີມເພີ່ມເຕີມ ບົນພື້ນຖານການເຈລະຈາ ແລະ ການຕົກລົງໃນສັນຍາໂດຍອີງຕາມເງື່ອນໄຂ, ທີ່ຕັ້ງ, ຈຸດພິເສດ ເປັນຕົ້ນແມ່ນເຂດຫ່າງໄກຊອກຫຼີກ, ກິດຈະການທີ່ລັດຖະບານສົ່ງເສີມພິເສດ.

**9. ສິດ ແລະ ພັດທະຂອງຜູ້ພັດທະນາ ເຂດເສດຖະກິດພິເສດມີຄືແນວໃດ?**

ຜູ້ພັດທະນາທີໄດ້ຮັບອະນຸມັດຈາກລັດຖະບານ ໃນການພັດທະນາເຂດເສດຖະກິດພິເສດ ຈະໄດ້ຮັບສິດ ຕາມທີໄດ້ກຳນົດໄວ້ໃນກົດໝາຍ, ດຳລັດ ແລະ ການຕົກລົງລະຫວ່າງລັດລັດຖະບານ ແລະ ຜູ້ພັດທະນາເຂດດັ່ງນີ້:

1) ໄດ້ຮັບການສົ່ງເສີມພິເສດ ແລະ ອຳນວຍຄວາມສະດວກ ໃນການພັດທະນາເຂດເສດຖະກິດພິເສດ ຕາມທີໄດ້ກຳນົດໄວ້ໃນກົດໝາຍ;
2) ໄດ້ຮັບການປົກປ້ອງການລົງທຶນ ລວມທັງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
3) ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ ຂອງ ສປປ ລາວ;
4) ນຳໃຊ້ທີດິນຕາມອາຍຸສັນຍາພັດທະນາ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5) ເປັນເຈົ້າກຳມະສິດຕໍ່ຊັບສິນຕົນ, ເປັນຕົ້ນ ຕຶກ, ອາຄານ ຫຼື ສິ່ງປຸກສ້າງ ໃນທີ່ດິນທີ່ໄດ້ຮັບສຳປະທານ, ມີສິດໂອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
6) ເປີດບັນຊີເປັນເງິນກີບ ຫຼື ເງິນຕາຕ່າງປະເທດຢູ່ທະນາຄານທີ່ຕັ້ງຢູ່ ສປປ ລາວ;

7) ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

10. **ສິດ ແລະ ພັນທະຂອງຜູ້ລົງທຶນ ມີຄືແນວໃດ?**

ຜູ້ລົງທຶນທີ່ລົງທຶນໃນ ສປປລາວ ມີສິດດັ່ງນີ້:

1) ລົງທຶນໃນທຸກຂະແໜງການ ແລະ ທຸກເຂດການລົງທຶນທີ່ບໍ່ຫວງຫ້າມຕາມກົດໝາຍ ຂອງ ສປປ ລາວ;
2) ລົງທຶນຕາມປະເພດ, ຮູບການ ແລະ ຮູບແບບວິສະຫະກິດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;
3) ຂໍສຳປະທານໂຄງການນຳລັດຖະບານ ຫຼື ອົງການປົກຄອງແຂວງ, ນະຄອນຄອງຫຼວງ ຕາມແຕ່ລະກໍລະນີ ເພື່ອພັດທະນາໂຄງການໃດໜຶ່ງ;
4) ຂໍສ້າງຕັ້ງຫ້ອງການຜູ້ຕາງໜ້າ ຫຼື ສາຂາຂອງຕົນຢູ່ ສປປລາວ;
5) ຂໍປ່ຽນວັດຖຸປະສົງ ຫຼື ກິດຈະການການລົງທຶນ ໃນກໍລະນີທີ່ການດຳເນີນທຸລະກິດຂອງຕົນ ຫາກບໍ່ມີປະສິດທິຜົນ ເນື່ອງຈາກການປ່ຽນແປງທາງດ້ານນະໂຍບາຍ, ກົດໝາຍ ແລະ ລະບຽບການ;
6) ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
7) ໄດ້ຮັບການປົກປ້ອງດ້ານຕ່າງໆ ຈາກລັດ, ສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການລົງທຶນຂອງຕົນ;
8) ໄດ້ຮັບການອຳນວຍຄວາມສະດວກໃນດ້ານຕ່າງໆ ໃນການລົງທຶນຂອງຕົນ;
9) ໄດ້ຮັບຜົນປະໂຫຍດຈາກການເຊົ່າ ຫຼື ການສຳປະທານ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການຂອງ ສປປ ລາວ
10) ສຳລັບຜູ້ເຊົ່າ, ສຳປະທານທີ່ດິນ ມີສິດໃຊ້ທີ່ດິນຕາມອາຍຸເຊົ່າ ຫຼື ສຳປະທານ, ໃຫ້ສືບທອດສັນຍາເຊົ່າທີ່ດິນຕາມອາຍຸສັນຍາ ແລະ ຕາມກົດໝາຍ ແລະ ລະບຽບການ;
11) ເປັນເຈົ້າກຳມະສິດຕໍ່ຊັບສິນຂອງຕົນ ລວມທັງຕຶກ, ອາຄານ ຫຼື ສິ່ງປຸກວ້າງໃນທີ່ດິນທີ່ໄດ້ຮັບການສຳປະທານ, ມີສິດຖອນກຳມະສິດໃຫ້ຄົນພາຍໃນ ຫຼື ຕ່າງປະເທດ ຕາມກົດໝາຍ ແລະ ລະບຽບການ;
12) ເປີດບັນຊີ ເປັນເງິນກີບ ຫຼື ເງິນຕາຕ່າງປະເທດ ຢູ່ທະນາຄານທີ່ຕັ້ງຢູ່ ສປປລາວ;
13) ຍື່ນຄຳຮ້ອງທຸກຕໍ່ອົງການທີ່ກ່ຽວຂ້ອງ ໃນກໍລະນີທີ່ເຫັນວ່າຕົນ ຖືກອັບປະໂຫຍດໃນການລົງທຶນ;
14) ໄດ້ຮັບສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.